## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 12 ກຸມພາ 2006 ( 2-12-2006 )

---

# ຕ້ອງເສັຽສະລະຈຶ່ງຈະຮັບໃຊ້ພຣະເຈົ້າໄດ້

**ຂໍ້ພຣະຄັມພີໃນບົດຮຽນ:** ຢຣມ 26:1-16

**ຄວາມຈິງໃນພຣະຄັມພີ:** ການຮັບໃຊ້ພຣະເຈົ້າຢ່າງສັດຊື່ນັ້ນ ຕ້ອງມີການເສັຽສະລະຢ່າງມາກມາຍ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແມ່ນເພື່ອຊ່ອຍທ່ານໃຫ້ເຕີບໃຫຍ່ຂຶ້ນໃນການຮັບໃຊ້ພຣະເຈົ້າຢ່າງສັດຊື່ດ້ວຍ:

- ໃຫ້ຮູ້ຈັກວ່າການຮັບໃຊ້ພຣະເຈົ້າດ້ວຍຄວາມສັດຊື່ນັ້ນ ຕ້ອງມີການເສັຽສະລະຢ່າງມາກມາຍ, ແລະ
- ໃຫ້ຍອມຕົວທີ່ຈະຮັບໃຊ້ພຣະເຈົ້າຢ່າງສັດຊື່ ເຖິງແມ່ນວ່າການເຮັດເຊັ່ນນັ້ນຈະເປັນການເສັຽສະລະກໍຕາມ.

## ເພື່ອຈະຮັບໃຊ້ພຣະເຈົ້າຢ່າງສັດຊື່ຂ້າພະເຈົ້າຈະຕ້ອງໄດ້ເສັຽສະລະບໍ່?

ໃນວັນທີ 15 ມີນາ 2004, ຜູ້ຮັບໃຊ້ພຣະເຈົ້າສີ່ຄົນຈາກຄະນະຊາວເທີນບັບຕິສໄດ້ຖືກຂ້າຕາຍໃນປະເທດອີຣັກ. ນາງ ແຄຣີ ຊຶ່ງເປັນສະມາຊິກຄົນທີຫ້າໃນທີມງານນີ້ ໄດ້ຫວິດຕາຍໄປແຕ່ວ່າຖືກບາດເຈັບສາຫັດເຫມືອນກັນ. ນາງໄດ້ປະກາດຕໍ່ພວກຜູ້ປະກາດພຣະທັມທີ່ກອງປະຊຸມຄະນະບັບຕິສທີ່ອິນດີອານາໂປລີສໃນວັນທີ 16 ມິຖຸນາ 2004. ໃນຣະຫວ່າງເຣື່ອງທັງຫລາຍນັ້ນ, ນາງໄດ້ເວົ້າວ່າ, " ພຣະເຢຊູຂອງຂ້າພະເຈົ້າໄດ້ທົນເຈັບຈາກບາດແຜເຕັມຕົວຈາກການທຸບຕີ. ແລ້ວພວກເຮົາຈະທົນນັ່ງເສີຍໆແລະເວົ້າວ່າ, " ຂ້າພະເຈົ້າຈະຮັບໃຊ້ບໍ່ໄດ້ດອກ ເພາະວ່າມັນຍາກຫລາຍ? ຈົ່ງເຊື່ອຂ້າພະເຈົ້າ, ສຳລັບພຣະເຢຊູຂອງຂ້າພະເຈົ້າ, ມັນເປັນພຽງແຕ່ສິ່ງນ້ອຍທີ່ສຸດເທົ່ານັ້ນທີ່ຂ້າພະເຈົ້າຈະເຮັດໄດ້."

ຢ່າຄິດວ່າພວກຕໍ່ຕ້ານ, ພວກນັກວິຈານ,ຫລືວ່າຄົນທີ່ທົວຂວັນທີ່ພວກເຮົາໄດ້ຮັບຈາກການຮັບໃຊ້ພຣະເຈົ້ານັ້ນໄດ້ຈືດຈາງລົງຈົນວ່າເກືອບບໍ່ມີຄວາມຫມາຍອັນໃດເມື່ອສົມທຽບກັບປະສົບການຮັບໃຊ້ຂອງພຣະເຢຊູຄຣິດເລີຍ? ໃນຂະນະທີ່ພວກເຮົາໄດ້ສຶກສາເບິ່ງການຕໍ່ຕ້ານຂອງເຢເຣມີຢານັ້ນ ພວກເຮົາຈະໄດ້ສັງເກດເຫັນວ່າການສນອງຕອບຂອງພວກເຮົານັ້ນຄວນຈະເປັນຢ່າງໃດ?

## ສຶກສາພຣະຄັມພີ

### 1. ຈົ່ງຍອມຮັບເອົາງານຫນັກຈາກພຣະເຈົ້າ ( ຢຣມ 26:1-7 )

ເຢເຣມີຢາໄດ້ຮູ້ຕັ້ງແຕ່ຕົ້ນຂອງການຮັບໃຊ້ຂອງເພິ່ນວ່າຈະໄດ້ຮັບການຕໍ່ຕ້ານຢ່າງແຮງຈາກປະຊາຊົນຂອງເພິ່ນເອງ ( ຢຣມ 1:17-19 ). ເຖິງຢ່າງໃດກໍດີ ພຽງແຕ່ເພິ່ນໄດ້ເຣີ່ມຕົ້ນເທສນາ ເພິ່ນກໍໄດ້ພົບກັບຄວາມຈິງເຣື່ອງຄົນທີ່ຕໍ່ສູ້ກັບເພິ່ນຢ່າງຫນ້າຕໍ່ຫນ້າໃນທັນທີ. ນັກສຶກສາພຣະຄັມພີສ່ວນມາກເຊື່ອວ່າພຣະທັມເຢເຣມີຢາບົດທີເຈັດໄດ້ບັນຈຸຄວາມພໍອົກພໍໃຈຂອງຜູ້ປະກາດພຣະທັມໃນຄຳວ່າ, " ການເທສນາໃນວິຫານ." ການສຶກສາໃນວັນນີ້ໄດ້ເນັ້ນໃສ່ການຕອບສນອງຂອງພວກຜູ້ນຳສາສນາຕໍ່ການເທສນາຂອງຜູ້ປະກາດພຣະທັມ. ຢຣມ 26:2-6 ໄດ້ບອກເຖິງການສລູບຢ່າງສັ້ນໆຂອງຄຳເທສນານັ້ນ. ຕາມທີ່ຈິງແລ້ວເພິ່ນໄດ້ເວົ້າວ່າຖ້າຫາກຊາວຢູດາບໍ່ໄດ້ປ່ຽນທິດທາງການດຳເນີນຊີວິດຂອງພວກເຂົາ, ພຣະວິຫານແລະເມືອງຂອງເຂົາຈະໄດ້ຖືກທຳລາຍລົງເຫມືອນດັ່ງສູນກາງສາສນາເດີມທີ່ເມືອງຊີໂລ.

ເຣື່ອງໃນບົດເທສນາແມ່ນປີ 609-608 ກ່ອນ ຄ.ສ. ( ຂໍ້ 1 ). ພວກເຮົາຮູ້ວ່າ ກະສັດເຢໂຮຢາກິມ, ເຈົ້າຊີວິດຂອງຢູດາ ໄດ້ເຣີ່ມປົກຄອງແຕ່ປີ 609 ກ່ອນ ຄ.ສ. ອີງຕາມ 2 ກສ 23:37, " ພຣະອົງຊົງເປັນມານໃນສາຍພຣະເນດ

ຂອງພຣະເຈົ້າເຫມືອນດັ່ງບັນພະບຸຣຸດຂອງພຣະອົງໄດ້ກະທຳມາ." ພວກເຮົາຮູ້ວ່າພຣະອົງໄດ້ລົບລ້າງການດັດແປງແກ້ໄຂແບບແຜນຫລາຍຢ່າງທີ່ພຣະບິດາທີ່ດີຂອງພຣະອົງເອງຄືກະສັດໂຢເຊອາໄດ້ຕັ້ງຂື້ນມາ. ເຢເຣມີອາໄດ້ບອກວ່າເຢໂຮຢາກິມເປັນຜູ້ຜະເດັດການທີ່ໃຈຄັບແຄບທີ່ການປົກຄອງຂອງພຣະອົງເຕັມໄປດ້ວຍການຂອງຄວາມຍຸຕິທັມໃນສັງຄົມ ( ຢຣມ 22:15-17 ). ເຖິງແມ່ນວ່າພຣະນາມຂອງເຈົ້າຊີວິດຈະບໍ່ໄດ້ລະບຸໃນຄຳເທສນານັ້ນກໍຕາມ, ເຢເຣມີອາຊີ້ວ່າພຣະອົງຕ້ອງເປັນຜູ້ຮັບຜິດຊອບຢ່າງຫລວງຫລາຍໃນເຣື່ອງການບໍ່ເອົາໃຈໃສ່ຕໍ່ພຣະບັນຍັດຂອງພຣະເຈົ້າ. ສະຖານທີ່ຂອງການເທສນານັ້ນແມ່ນໃນເດີ່ນຂອງພຣະວິຫານຂອງພຣະເຈົ້າ ທີ່ເປັນເປີດໃຫ້ແກ່ຄົນທີ່ມານະມັສການທັງຫມົດ. ຄົນທີ່ຟັງແມ່ນຄົນທີ່ມາຈາກເມືອງຕ່າງໆຂອງຢູດາ ທີ່ໄດ້ມາທີ່ພຣະວິຫານເພື່ອນະມັສການ. ຄົນທັງຫລາຍຈະຕ້ອງມີຈຳນວນມາກມາຍເມື່ອມັນອາດລວມກັນບໍ່ພຽງແຕ່ຄົນພາຍໃນເມືອງ ແຕ່ວ່າຄົນທັງຫລາຍຈາກເມືອງຕ່າງໆທີ່ຢູ່ອ້ອມແອ້ມນັ້ນດ້ວຍ. ບາງເທື່ອການຮວມຊຸມນຸມຂອງພວກເຂົາເຈົ້າອາດຈະແມ່ນໃນການສລອງອັນຍິ່ງໃຫຍ່ສຳຄັນກໍເປັນໄດ້. ພວກຜູ້ນຳທາງສາສນາຊຶ່ງປະກອບດ້ວຍພວກປະໂຣຫິດ ແລະພວກຜູ້ປະກາດພຣະທັມ, ພວກເຂົາເຈົ້າບໍ່ຢາກຮັບເອົາຄຳເທສນາຂອງເຢເຣມີຢາເຊັ່ນດຽວກັນກັບບັນດາພວກຄົນທັງຫລາຍເຫມືອນກັນ.

ພຣະເຈົ້າໄດ້ໃຫ້ຄຳທິດທາງຕໍ່ເຢເຣມີຢາຢ່າງພິເສດເພື່ອຈະໃຫ້ເພິ່ນໄດ້ເທສນາພຣະທັມນັ້ນ. ເພິ່ນຈຳຕ້ອງໄດ້ເທສນາທຸກໆຄຳທີ່ພຣະເຈົ້າໄດ້ສັ່ງເພິ່ນນັ້ນ. ພຣະເຈົ້າໄດ້ບອກເພິ່ນວ່າ ຢ່າໄດ້ເກັບກຳເອົາຈັກຄຳໄວ້ເລີຍ ເພາະວ່າເຢເຣມີຢາໄດ້ຖືກທົດລອງໃຫ້ເທສນາຢ່າງອ່ອນນອມເພື່ອເຮັດໃຫ້ຄົນຟັງດີໃຈແລະພໍໃຈແມ່ນບໍ່? ເນື້ອໃນຂອງຄຳເທສນານັ້ນມີທັງການທຳໃຫ້ຢ້ານກົວ ແລະທຳໃຫ້ມີຄວາມຫວັງໄປພ້ອມ. ຄວາມຫວັງນັ້ນແມ່ນໄດ້ເວົ້າອອກມາດ້ວຍທັມມະຊາດຖ້າຫາກວ່າມີການປ່ຽນແປງກັບໃຈຈາກຄຳຕັກເຕືອນຕ່າງໆ. ຖ້າຫາກວ່າພວກເຂົາຫາກຢາກຟັງແລະກັບມາພຣະເຈົ້າກໍຈະຜ່ອນຜັນຫລືປ່ຽນໃຈຕໍ່ການທຳລາຍຕາມທີ່ພຣະເຈົ້າໄດ້ມີແຜນການຕໍ່ເຂົາແລ້ວນັ້ນ. ການຜ່ອນຜັນຫລືວ່າປ່ຽນໃຈໃນທີ່ນີ້ບໍ່ແມ່ນໃຫ້ເຮົາເຂົ້າໃຈວ່າ ພຣະເຈົ້າໄດ້ປ່ຽນແປງການກະທຳຜິດຂອງພຣະອົງທີ່ໄດ້ວາງແຜນການໄວ້ແລ້ວນັ້ນແຕ່ຢ່າງໃດ. ພວກເຮົາຄວນຈະເຂົ້າໃຈວ່າການຜ່ອນຜັນຫລືວ່າປ່ຽນໃຈຂອງພຣະເຈົ້ານັ້ນ ແມ່ນມາຈາກການຮູ້ສຶກເສັຽໃຈແລະກິນແຫນງໃຈທີ່ພົລເມືອງທັງຫລາຍຢາກຈະກັບໃຈຕ່າງຫາກ. ການຟັງ ແມ່ນມີຄວາມຫມາຍຫນັກກວ່າການໄດ້ຍິນ; ມັນມີຄວາມຫມາຍວ່າຢາກຈະຟັງຄວາມ. ດັ່ງນັ້ນ ຄົນທີ່ຟັງເຢເຣມີຢາທັງຫລາຍຈຶ່ງສົມຄວນຈະໄດ້ຍິນ ແລະຟັງຄວາມພຣະບັນຍັດຂອງພຣະເຈົ້າຈາກການປະກາດຂອງຜູ້ປະກາດພຣະທັມນັ້ນ.

ການຂູ່ເຂັນໃຫ້ຢ້ານຂອງຄຳເທສນາຂອງເຢເຣມີຢານັ້ນ ແມ່ນໄດ້ພົບໃນຄຳວ່າ ຖ້າທ່ານຫາກບໍ່ຟັງຕໍ່ເຮົາ. ອັນນີ້ບໍ່ແມ່ນຄຳຕັກເຕືອນຄັ້ງທຳອິດທີ່ພຣະເຈົ້າໄດ້ມີຕໍ່ພວກພົລເມືອງ. ໃນຂໍ້ທີ 5 ແລະຂໍ້ອື່ນໆ ( ຢຣມ 7:25; 25:4; 29:19, 35:15, 44:4 ), ຜູ້ປະກາດພຣະທັມໄດ້ເນັ້ນວ່າພຣະເຈົ້າໄດ້ສົ່ງຜູ້ປະກາດພຣະທັມຂອງພຣະອົງຄັ້ງແລ້ວຄັ້ງເລົ່າມາຢູດາ ແຕ່ກໍໄດ້ຖືກພວກເຂົາປະຕິເສດທັງຫມົດ. ດ້ວຍເຫດນີ້ ຈຶ່ງໄດ້ຮູ້ຈັກວ່າຊາວຢູດາທັງຫມົດບໍ່ໄດ້ຟັງຄວາມແລະເຮັດຕາມບັນຍັດຂອງພຣະເຈົ້າເລີຍ. ພາຍໃຕ້ຜູ້ປະກາດພຣະທັມເອລີ, ເມືອງຊີໂລເປັນສູນກາງທາງສາສນາທີ່ສຳຄັນທີ່ປະຊາຊົນອິສຣາເອັນໄດ້ປະເຊີນຫນ້າກັນກັບພຣະເຈົ້າ ( 1 ຊມອ 1-4 ). ເຖິງຢ່າງໃດກໍດີ ໃນປີ 1050 ກ່ອນ ຄ.ສ. ພວກຟີລິສຕິນໄດ້ມາທຳລາຍສູນກາງນັ້ນຢ່າງຮາບຄາບ. ຊາຕາກັມແບບນີ້ໄດ້ຄອຍຖ້າຊາວເຢຣູຊາເລັມທີ່ບໍ່ຍອມກັບໃຈ. ເມືອງນີ້ຈະກາຍເປັນປຽບດັ່ງເມືອງທີ່ຖືກສາບແຊ່ງ. ຈະເວົ້າອີກຢ່າງນຶ່ງ ຄົນທັງຫລາຍທີ່ຢູ່ອ້ອມແອ້ມຈະໄດ້ປ້ອຍດ່າສັດຣູທັງຫລາຍຂອງເຂົາດ້ວຍຄຳວ່າ, "ໃຫ້ພວກສູເປັນດັ່ງເມືອງເຢຣູຊາເລັມເນີ!" ຈຶ່ງເປັນອັນວ່າຄົນທີ່ຟັງເຢເຣມີຢາຈຶ່ງບໍ່ພໍໃຈນຳສິ່ງທັງຫລາຍທີ່ເພິ່ນເວົ້າກັບເຂົາ ( ຂໍ້ 7 ). ການຕອບສນອງໃນດ້ານລົບຈຶ່ງເປັນຜົນອອກມາ.

## 2. <u>ຢ່າງົ່ງອນຕົວພາຍໃຕ້ການກົດດັນ</u> ( ຢຣມ 26:8-14 )

ຄົນທີ່ຟັງເຢເຣມີຢາໄດ້ແປຄຳເທສນາໃນເຣື່ອງການເຮັດໃຫ້ຢ້ານການທຳລາຍພຣະວິຫານ ແລະກຸງເຢຣູຊາເລັມດ້ວຍຄວາມກຽດຊັງ. ພວກເຂົາຄິດວ່າທັງວິຫານແລະກຸງແມ່ນເປັນກັມມະສິດຂອງພຣະເຈົ້າແລະເຊື່ອວ່າພຣະອົງຈະຮັກສາຈາກການທຳລາຍໄວ້ໄດ້. ປະຊາຊົນໄດ້ມອບຄວາມຫວັງໄວ້ນຳຄຳຫມັ້ນສັນຍາຂອງກະສັດໂຊໂລໂມນຊຶ່ງເປັນຜູ້ກໍ່ສ້າງ ( 1 ກະສັດ 8:13 ); ແລະຄຳເວົ້າຂອງເອຊາຢາ ( ອຊຢ 33:20 ), ຜູ້ມາກ່ອນຜູ້ປະກາດພຣະທັມເຢເຣມີ

ຢາ. ສິ່ງທີ່ຄົນຟັງລືມຄິດນັ້ນແມ່ນຄຳໝັ້ນສັນຍານັ້ນແມ່ນຄຳໝັ້ນສັນຍາທີ່ໃຫ້ຊາວອິສຣາເອັນສັດຊື່ຕໍ່ພຣະເຈົ້າ.

ໃນບໍ່ດົນເມື່ອເຢເຣມີຢາໄດ້ເທສນາຈົບລົງພວກທີ່ຟັງເພິ່ນເທດໄດ້ລຸກຂຶ້ນຕໍ່ສູ້ເພິ່ນໂລດ, ພວກເຂົາໄດ້ຈັບເພິ່ນແລ້ວຮ້ອງໂຮຂຶ້ນວ່າ, " ເຈົ້າຈະຕ້ອງຕາຍ! " ຄຳວ່າຈັບແປວ່າຈັບບີບ, ຫລືວ່າທຳກັບເພິ່ນຢ່າງຮຸນແຮງ. ພວກເຂົາມີເຈດຕະນາຈະຂ້າເພິ່ນ, ບາງທີກໍອາດແມ່ນດ້ວຍການແກວ່ງກ້ອນຫີນໃສ່ເພິ່ນ. ພວກເຂົາຄິດວ່າເພິ່ນສົມຄວນຈະຕ້ອງຕາຍເພາະວ່າເພິ່ນໄດ້ຂົ່ມຂູ່ເມືອງແລະວິຫານທີ່ສັກສິດຂອງເຂົາແລະບາງທີກໍອາດຈະແມ່ນເພິ່ນໄດ້ຖືກເຕືອນຈາກພວກນັກທັມແລ້ວວ່າໃຫ້ຢຸດເຊົາການຂົ່ມຂູ່ນີ້ແລ້ວ. ດ້ວຍເຫດວ່າພວກນັກທັມ ແລະພວກຜູ້ປະກາດພຣະທັມນັ້ນເປັນພວກໂຈດ ລວມທັງປະຊາຊົນທັງຫມົດທີ່ຮ່ວມຫົວກັນຕໍ່ສູ້ເຢເຣມີຢາ. ແນ່ນອນທີ່ສຸດພວກເຂົາໄດ້ຖືກຜີມານປົກຄຸມໃຫ້ກະທຳສິ່ງນີ້ຄືການຕໍ່ສູ້ກັບຜູ້ປະກາດພຣະທັມຂອງພຣະເຈົ້າ.

ພວກທີ່ຕໍ່ສູ້ກັບເຢເຣມີຢາໄດ້ເຮັດໃຫ້ເກີດມີການອຶກະທຶກ ຈົນວ່າພວກເຈົ້ານາຍຂອງຢູດາໄດ້ເປີດການສອບສວນວ່າໄດ້ມີເຫດການຫຍັງເກີດຂຶ້ນ. ຄົນເຫລົ່ານີ້ບໍ່ໄດ້ເປັນຄົນໃນຄອບຄົວພຣະຣາຊວັງແຕ່ວ່າເປັນຂ້າຣາຊການຝ່າຍຕຸລາການໃນພຣະຣາຊວັງ. ເຮົາບໍ່ຮູ້ວ່າພວກເຂົາໄດ້ຍິນເຣື່ອງຫຍັງຈາກຄົນທີ່ປະກາດຂ່າວປະເສີດນັ້ນ ພວກເຮົາບໍ່ຊາບ ແຕ່ວ່າພວກເຂົາມີຫນ້າທີ່ຈະຕ້ອງໄດ້ຮັກສາຄວາມສງົບໃນພຣະວິຫານນັ້ນ. ເພາະຮາງວັງຂອງເຈົ້າຊີວິດກໍຕິດກັນຢູ່ກັບຂ້າງໆພຣະວິຫານນັ້ນ, ດັ່ງນັ້ນພວກຂ້າຣາຊການຈຶ່ງບໍ່ໄດ້ໄປຫາໃກປານໃດ. ພວກເຂົາຕ້ອງການຈະເຮັດໃຫ້ການຟັງການໃຫ້ການດ້ວຍຄວາມຍຸດຕິທັມແກ່ເຢເຣມີຢາ ດັ່ງນັ້ນພວກເຂົາຈຶ່ງຕັ້ງບ່ອນທຳງານຂອງຄະນະຍຸດຕິທັມທີ່ປະຕູໃຫມ່ຂອງພຣະວິຫານ. ເປັນປະຕູທີ່ຢູ່ຂ້າງໆບ່ອນຄົນຫຽວຫລາຍ ແລະບາງທີກໍອາດຈະມີຫ້ອງຊຶ່ງເປັນຫ້ອງສານທີ່ຖືກລັກສະນະແທ້ໆ ( ພບຍ 21:19; 2 ຊມອ 15:2 ).

ພວກປະໂຣຫິດແລະພວກຜູ້ປະກາດພຣະທັມໄດ້ເຣີ່ມສາກດ້ວຍການຕໍ່ສູ້ເຢເຣມີຢາຕໍ່ຫນ້າພວກເຈົ້ານາຍ. ບາງເທື່ອເພິ່ນບໍ່ໄດ້ໃຈແຍກຄຳເທສນາຂອງເພິ່ນອອກເປັນຂໍ້ໆ ເພາະວ່າຜູ້ຕາງຫນ້າຂອງສານອາດໄດ້ຍິນຄຳເທສນານັ້ນມາມາແລ້ວດ້ວຍຫູຂອງຕົນເອງ. ຄຳກ່າວຟ້ອງໄດ້ເຣີ່ມຂຶ້ນວ່າພວກເຂົາໄດ້ເວົ້າໃຫ້ເຢເຣມີຢາ ( 26:28-29 ). ລາວສົມຄວນຈະຕ້ອງຖືກຕັດສິນເຖິງຕາຍ ເພາະວ່າລາວໄດ້ພະຍາກອນຕໍ່ສູ້ນະຄອນຂອງພຣະເຈົ້າ. ແລ້ວຜູ້ປະກາດພຣະທັມໄດ້ໃຫ້ການຕໍ່ສູ້ເພື່ອຕົນເອງຕໍ່ຫນ້າພວກເຈົ້ານາຍແລະປະຊາຊົນທັງຫມົດວ່າ, ດ້ວຍກຽດແລະສັກສີແລະດ້ວຍຄວາມຫມັ້ນໃຈວ່າເພິ່ນພຽງແຕ່ໄດ້ເວົ້າວ່າ, ພຣະເຈົ້າໄດ້ສັ່ງເພິ່ນໃຫ້ມາທຳນວາຍເຫດການລ່ວງຫນ້າເຖິງເຣື່ອງພຣະວິຫານແລະນະຄອນນັ້ນ. ເພິ່ນບໍ່ໄດ້ແຕ່ງແປງຄຳເທສນາເຣື່ອງວັນພິພາກສານີ້ເອົາເອງ ແລະທັງບໍ່ໄດ້ຕັ້ງຕົນເອງເປັນຜູ້ປະກາດພຣະທັມເລີຍ. ເຖິງຢ່າງໃດກໍດີ ຄວາມຈິງກໍຈຳເປັນຕ້ອງໄດ້ເວົ້າອອກມາ ຄືວ່າຢູດາຈະບໍ່ມີຄວາມຫວັງທີ່ຈະມີຊີວິດອີກຕໍ່ໄປ. ເຢເຣມີຢາບອກໃຫ້ພວກເຈົ້າຊາຍທັງຫລາຍຕ້ອງປ່ຽນແປງການດຳຣົງຊີວິດ, ການກະທຳ ແລະຈະຕ້ອງຟັງສຽງຂອງພຣະເຈົ້າ. ຄຳທີ່ວ່າ ປ່ຽນແປງ ແລະ ການກະທຳ ມາຈາກ ຢຣມ 7:3 ແລະຫມາຍຄວາມວ່າການປະພຶດທີ່ຊອບທັມດ້ວຍການເຮັດຄວາມຍຸດຕິທັມ ແລະບໍ່ບັງຄັບຫນີບເຄັ່ງຄົນທີ່ອ່ອນແອແລະບໍ່ທີທາງປ້ອງການຕົນເອງໄດ້. ຖ້າຫາກວ່າພວກເຂົາໄດ້ຟັງຄວາມພຣະເຈົ້າ ພຣະອົງຈະບໍ່ທຳລາຍເມືອງຂອງເຂົາທັງວິຫານດ້ວຍ. ເຢເຣມີຢາໄດ້ຮູ້ສິດທິຂອງສານທີ່ຈະຕັດສິນໃນຄະດີຂອງເພິ່ນ ແລະຈະກ່າວຫາຫລືວ່າຈະທຳໃຫ້ພົ້ນຄະດີໄປໄດ້. ການນັບຖື ແລະຄວາມດີທີ່ເພິ່ນໄດ້ສະແດງອອກມາໃນສານນັ້ນ ແນ່ນອນທີ່ສຸດບໍ່ໄດ້ທຳໃຫ້ກໍຣະນີຄະດີຂອງເພິ່ນເສັຽຫາຍອັນໃດ. ເພິ່ນໄດ້ວາງໃຈໃນໃນຕົນເອງແລະໃນພຣະທັດຂອງພຣະເຈົ້າດ້ວຍ.

ການຮັບໃຊ້ພຣະເຈົ້າດ້ວຍຄວາມສັດຊື່ນັ້ນ ພວກເຮົາຕ້ອງມີການເສັຽສະລະອັນໃຫຍ່ຫລວງ ບາງເທື່ອກໍອາດຕ້ອງຈ່າຍດ້ວຍຊີວິດຂອງພວກເຮົາເອງເຊັ່ນດຽວກັນ.

### 3. <u>ຈົ່ງວາງໃຈພຣະເຈົ້າໃນເຣື່ອງຜົນງານ</u> ( ຢຣມ 26:15-16 )

ໃນການອັດຄະດີຕໍ່ຫນ້າສານນັ້ນ, ເພິ່ນໄດ້ເຕືອນສະຕິພວກເຂົາເຖິງເຣື່ອງອັນຕະລາຍຂອງການຕັດສິນໂທດໃສ່ຄົນທີ່ບໍ່ຜິດດ້ວຍ. ເພິ່ນບໍ່ໄດ້ຂົ່ມຂູ່ພວກເຈົ້າຊາຍທັງຫລາຍໃຫ້ຢ້ານດ້ວຍການແກ້ແຄ້ນສ່ວນຕົວຂອງເພິ່ນ ຫລືວ່າບໍ່ໄດ້ດ່າດ້ວຍວິທີໃດວິທີນຶ່ງ. ເພິ່ນພຽງແຕ່ໄດ້ຕັກເຕືອນພວກເຂົາວ່າ ( ດ້ວຍທຳນຽມຂອງສມັຍນັ້ນ ) ການຕັດສິນໃຫ້ປະ

ຫານຊີວິດຄົນທີ່ບໍ່ມີຄວາມຜິດນັ້ນ ສົມຄວນຈະຕ້ອງຖືກແກ້ແຄ້ນ ຫລືວ່າຕ້ອງຖືກຊົດເຊີຍຄືນ ( ປຖກ 9:5-6; ພບຍ 19:4-13 ). ເພິ່ນໄດ້ສລູບການແກ້ຕົວຕໍ່ຫນ້າສານດ້ວຍເວົ້າຊ້ຳແລ້ວຊ້ຳອີກວ່າ ພຣະເຈົ້າໄດ້ໃຊ້ເພິ່ນມາ ແລະໃຫ້ເວົ້າຄຳທັງຫມົດເຫລົ່ານີ້ຕໍ່ພວກເຈົ້າໂດຍກົງ. ໃນທີ່ສຸດພວກເຈົ້ານາຍແລະພວກປະຊາຊົນທັງຫມົດກໍໄດ້ຕັດສິນຄົນອີກຄົນນຶ່ງທີ່ບໍ່ມີຄວາມຜິດແທນເຢເຣມີຢາ. ພວກເຂົາໄດ້ຍົກການປ້ອງກັນຕົວເອງຂຶ້ນມາກ່າວ ຊຶ່ງທັງສອງຝ່າຍຄືເຂົາເອງແລະຄົນອື່ນໆໃນທີ່ນັ້ນກໍໄດ້ຍິນນຳກັນ ເພື່ອວ່າເຮັດໃຫ້ການຕັດສິນໂທດຂອງພວກເຂົາເປັນທີ່ຖືກຕ້ອງ. ຄຳເວົ້າຂອງເຂົານັ້ນຖືກຕ້ອງແທ້ ຄືວ່າຢູດາຈະພົ້ນການພິພາກສາລົງໂທດຈາກພຣະເຈົ້າກໍດ້ວຍການປ່ຽນແປງວິຖີຊີວິດໃຫມ່ຂອງເຂົາເທົ່ານັ້ນ. ນອກຈາກນັ້ນອີກ ພວກຜູ້ຕັດສິນໄດ້ສລູບວ່າພຣະເຈົ້າໄດ້ສົ່ງເຢເຣມາຢາມາ ທັງໄດ້ສັ່ງເພິ່ນໃຫ້ຕັກເຕືອນດ້ວຍພຣະຄຳຂອງພຣະອົງ. ເຖິງຢ່າງໃດກໍດີ ເພິ່ນກໍໄດ້ເປັນຜູ້ປະກາດພຣະທັມຂອງພຣະເຈົ້າແທ້ໆ.

ຂໍ້ 17-14 ຄືສ່ວນນຶ່ງພື້ນຖານແທ້ແຫ່ງພຣະຄຳຂອງພຣະເຈົ້າສຳລັບການສຶກສາວັນນີ້, ໄດ້ບອກພວກເຮົາເຖິງສອງເຣື່ອງຄືການທົດລອງ ແລະການແກ້ຄວາມຜິດໃຫ້. ອັນທຳອິດ " ພວກອາວຸໂສໃນແຜ່ນດິນ " ( ຂໍ້ 17 ) ໄດ້ໃຊ້ເປັນຕົວຢ່າງຂອງຜູ້ປະກາດພຣະທັມມີກາ ( ສັຕະວັດທີແປດ ກ່ອນ ຄ.ສ. ) ເພື່ອທຳໃຫ້ການຕັດສິນຕໍ່ຜູ້ປະກາດພຣະທັມເຢເຣມີຢາໃຫ້ເປັນທີ່ຖືກຕ້ອງ ( ຂໍ້ 18 ). ມີກາ ກໍເຫມືອນກັນກັບເຢເຣມີຢາໄດ້ພະຍາກອນຕໍ່ສູ້ກຸງເຢຣຸຊາເລັມ. ມີກາບໍ່ໄດ້ຖືກຕັດສິນລົງໂທດເພາະເຣື່ອງນີ້. ແທນທີ່ວ່າຈະເປັນດັ່ງນັ້ນ ກະສັດເຮເຊກີຢາ ທີ່ເປັນເຈົ້າຊີວິດໃນເວລານັ້ນໄດ້ສນອງຕອບໄປໃນທາງບວກຕໍ່ຄຳເທສນາຂອງມີກາ ແລະໄດ້ກອບກູ້ເອົາກຸງເຢຣູຊາເລັມເອົາໄວ້ໄດ້.

ອູຣີຢາ ຜູ້ປະກາດພຣະທັມອີກຄົນນຶ່ງທີ່ໄດ້ພະຍາກອນຕໍ່ສູ້ກຸງເຢຣູຊາເລັມເປັນຜູ້ມີໂຊກຮ້າຍ. ເຢໂຮຍາກິມເຈົ້າຊີວິດໃນສມັຍການຮັບໃຊ້ຂອງເຢເຣມີຢາ, ໄດ້ນຳເອົາຕົວຂອງອູຣີຢາຈາກປະເທດເອຢິບມາຄືນ ແລະໄດ້ຂ້າລາວເສັຽ ( ຂໍ້ 20-23 ). ເຣື່ອງນີ້ບອກໃຫ້ເຮົາຮູ້ວ່າຊາຕາກັມອັນຮ້າຍແຮງຂອງເຢເຣມີຢາໄດ້ເຂົ້າໃກ້ຄຽງກັນພຽງໃດ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.com ແປໂດຍ V.S.